# ອານຸສັນຍາຂອງສັນຍາວ່າດ້ວຍ ການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (1999)

ꧻꧻꧻꧻ

*ໂດຍຈົດຈຳໄດ້ວ່າ* ກົດບັດສະຫະປະຊາຊາດ ໄດ້ຢືນຢັນຄືນເຖິງ ຄວາມເຫລື້ອມໃສຕໍ່ສິດທິພື້ນຖານຂອງມະນຸດ, ຕໍ່ກຽດສັກສີ ແລະ ຄວາມປະເສີດຂອງຄວາມເປັນມະນຸດ ແລະ ຕໍ່ສິດສະເໜີພາບ ລະຫວ່າງ ຍິງ ແລະ ຊາຍ,

*ໂດຍຈົດຈຳໄດ້ວ່າ* ຖະແຫລງການສາກົນ ວ່າດ້ວຍສິດທິມະນຸດ, ຍັດຕິ 217 A (III) ໄດ້ບົ່ງໄວ້ວ່າ ມະນຸດທຸກຄົນ ລ້ວນແຕ່ເກີດມາມີອິສະລະພາບ ແລະ ກຽດສັກສີແລະສິດທີ່ເທົ່າທຽມກັນ ແລະ ທຸກຄົນມີສິດໄດ້ຮັບທຸກສິດທິແລະອິດສະລະພາບ ທີ່ໄດ້ບົ່ງໄວ້ໃນຖະແຫລງການນັ້ນ, ໂດຍປາສະຈາກການຈຳແນກໃດໆທັງສິ້ນ, ລວມທັງການຈຳແນກເພດ,

*ໂດຍທວນຄືນວ່າ* ສົນທິສັນຍາສາກົນກ່ຽວກັບສິດທິມະນຸດ, ຍັດຕິ 2200 A (XXI), ພາກພະນວກ, ແລະ ເຄື່ອງມືສາກົນດ້ານສິດທິມະນຸດອື່ນໆນັ້ນ ເກືອດຫ້າມການຈຳແນກ ລະຫວ່າງເພດ,

*ໂດຍທວນຄືນອີກເຖິງ* ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ສົນທິສັນຍາ) ຊຶ່ງ ລັດພາຄີຂອງສົນທິສັນຍາດັ່ງກ່າວ ກ່າວປະນາມທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ເຫັນດີນຳໃຊ້ທຸກວິທີການທີ່ເໝາະສົມຢ່າງທັນການ ເພື່ອດຳເນີນນະໂຍບາຍລຶບລ້າງການຈຳແນກຕໍ່ແມ່ຍິງ,

*ໂດຍຢືນຢັນຄືນເຖິງ* ຄວາມຕັດສິນໃຈຂອງຕົນ ທີ່ຈະຮັບປະກັນໃຫ້ແມ່ຍິງໄດ້ຊົມຊື່ນກັບ ສິດທິມະນຸດ ແລະ ອິດສະລະ ພາບພື້ນຖານທຸກປະການຢ່າງເຕັມສ່ວນ ແລະ ສະເໝີພາບ, ແລະ ເອົາມາດຕະການທີ່ມີປະສິດຕິພາບ ເພື່ອ ສະກັດກັ້ນການລະເມີດສິດທິ ແລະ ອິດສະລະພາບເຫລົ່ານັ້ນ,

***ດັ່ງນັ້ນ, ລັດພາຄີ ຂອງອະນຸສັນຍາສະບັບນີ້ ຈຶ່ງໄດ້ຕົກລົງກັນດັ່ງຕໍ່ໄປນີ້:***

## ມາດຕາ 1

ລັດພາຄີຂອງອະນຸສັນຍາສະບັບນີ້ (ລັດພາຄີ) ຮັບຮູ້ສິດອຳນາດຂອງຄະນະກຳມະການລຶບລ້າງການຈຳແນກຕໍ່ແມ່ຍິງ (ຄະນະກຳມະການ) ໃນການຮັບ ແລະ ພິຈາລະນາໜັງສືແຈ້ງຄວາມທີ່ຍື່ນຕໍ່ຄະນະກຳມະການ ໂດຍສອດຄ່ອງກັບມາດຕາ 2.

## ມາດຕາ 2

ບຸກຄົນ ຫລື ຂອງຜູ້ຕາງໜ້າບຸກຄົນ ຫລື ຕາງໜ້າກຸ່ມຄົນ, ພາຍໃຕ້ຂອບເຂດອຳນາດສານຂອງລັດພາຄີໃດນຶ່ງ, ທີ່ອ້າງວ່າເປັນບຸກຄົນ ຫລື ກຸ່ມຄົນ ທີ່ຖືກເຄາະຮ້າຍຈາກການລະເມີດສິດທິໃດນຶ່ງ ທີ່ບົ່ງ ໄວ້ໃນສົນທິສັນຍາ ໂດຍລັດພາຄີ ສາມາດຍື່ນໜັງສືແຈ້ງຄວາມ ດ້ວຍຕົນເອງ ຫລື ໃນນາມຕາງໜ້າຕໍ່ຄະນະກຳມະການ. ຫາກຍື່ນໃນນາມຕາງໜ້າບຸກ

ຄົນ ຫລື ກຸ່ມຄົນນັ້ນ ຈະຕ້ອງມີຄວາມເຫັນດີຂອງເຂົາເຈົາ, ເວັ້ນເສຍແຕ່ວ່າ ຜູ້ຂຽນໜັງ ສືແຈ້ງຄວາມ ຈະສາມາດໃຫ້ເຫດຜົນຢັ້ງຢືນໄດ້ວ່າ ການແຈ້ງຄວາມດັ່ງກ່າວ ໂດຍບໍ່ມີຄໍາເຫັນດີນັ້ນ ເປັນການກະທໍາທີ່ຖືກຕ້ອງແລ້ວ.

### ມາດຕາ 3

ໜັງສືແຈ້ງຄວາມ ຈະຕ້ອງເປັນລາຍລັກອັກສອນ ແລະ ລະບຸຊື່ຜູ້ຂຽນ. ຄະນະກໍາມະການ ຈະບໍ່ຮັບແຈ້ງຄວາມໃດໆກ່ຽວກັບການລະເມີດສິນທິສັນຍາ ຂອງລັດທີ່ບໍ່ແມ່ນພາຄີຂອງອານຸສັນຍາສະບັບນີ້.

### ມາດຕາ 4

1. ຄະນະກໍາມະການຈະບໍ່ພິຈາລະນາ ໜັງສືແຈ້ງຄວາມໃດ ນອກຈາກໄດ້ມີຄວາມແນ່ໃຈແລ້ວວ່າຄະດີ ໃນແຈ້ງຄວາມນັ້ນໄດ້ຜ່ານທຸກວິທີການແກ້ໄຂທີ່ຢູ່ພາຍໃນປະເທດແລ້ວ ແລະ ເວັ້ນເສຍແຕ່ວ່າການແກ້ໄຂດັ່ງກ່າວນັ້ນ ຫາກແກ່ຍາວຢ່າງບໍ່ມີເຫດຜົນ ຫລື ນໍາມາຊຶ່ງການຂາດປະສິດທິພາບໃນການແກ້ໄຂ.

2. ຄະນະກໍາມະການ ຈະປະກາດວ່າ ຫນັງສືແຈ້ງຄວາມບໍ່ເປັນທີ່ຮັບເອົາໄດ້ໃນກໍລະນີທີ່:

   (ກ). ບັນຫາດຽວກັນນັ້ນໄດ້ຖືກຄະນະກໍາມະການພິຈາລະນາ ຫລື ໄດ້ຮັບ ຫລື ກໍາລັງຖືກພິຈາລະນາ ພາຍໃຕ້ລະບຽບການສືບສວນສອບສວນສາກົນອື່ນໆ ຫລື ແກ້ໄຂແລ້ວ.

   (ຂ) ໜັງສືແຈ້ງຄວາມນັ້ນ ບໍ່ສອດຄ່ອງກັບຂໍ້ບັນຍັດຂອງສົນທິສັນຍາ;

   (ຄ) ໜັງສືແຈ້ງຄວາມບໍ່ມີຫລັກຖານຫນັກແຫນ້ນຈະແຈ້ງ ຫລື ບໍ່ມີມູນຄວາມຈິງພຽງພໍ;

   (ງ) ເປັນການໃຊ້ສິດ ໃນການຍື່ນໜັງສືແຈ້ງຄວາມ ທີ່ບໍ່ຖືກຕ້ອງ.

   (ຈ) ຂໍ້ເທັດຈິງໃນການແຈ້ງຄວາມນັ້ນ ໄດ້ເກີດຂຶ້ນກ່ອນມື້ອະນຸສັນຍານີ້ມີຜົນບັງຄັບໃຊ້ກັບລັດພາຄີທີ່ກ່ຽວຂ້ອງ, ເວັ້ນເສຍແຕ່ວ່າ ຂໍ້ເທັດຈິງນັ້ນ ຫາກຍັງສືບຕໍ່ເກີດຂຶ້ນພາຍຫລັງວັນດັ່ງກ່າວ.

### ມາດຕາ 5

1. ພາຍຫລັງການຮັບໜັງສືແຈ້ງຄວາມ ແລະ ກ່ອນການຕັດສິນຄວາມຖືກຕ້ອງຂອງໜັງສືແຈ້ງຄວາມຈະມີຂຶ້ນນັ້ນ, ຄະນະກໍາມະການຈະສະເໜີໄປຍັງລັດພາຄີທີ່ກ່ຽວຂ້ອງ ເພື່ອ ໃຫ້ລັດດັ່ງກ່າວ ພິຈາລະນາໂດຍດ່ວນ ຂໍ້ສະເໜີ ໃຫ້ລັດພາຄີດັ່ງກ່າວ ເອົາມາດຕະການຊົ່ວຄາວຕາມຄວາມຈໍາເປັນ ເພື່ອ ຫລີກລ່ຽງຜົນຮ້າຍທີ່ບໍ່ສາມາດປົວແປງ ຄືນໄດ້ ຊຶ່ງ ອາດຈະເກີດຂຶ້ນກັບຜູ້ເຄາະຮ້າຍຈາກການລະເມີດທີ່ຖືກກ່າວຫານັ້ນ.

2. ໃນເມື່ອຄະນະກຳມະການປະຕິບັດສິດພາຍໃຕ້ວັກທີ 1ຂອງມາດຕານີ້, ການກະທຳດັ່ງກ່າວ ບໍ່ໃຫ້ຖືວ່າການຕັດສິນຄວາມ ເປັນທີ່ຍອມຮັບ ຫລື ຄວາມຖືກຕ້ອງຂອງໜັງສືແຈ້ງຄວາມ.

### ມາດຕາ6

1. ຄະນະກຳມະການຈະແຈ້ງຢ່າງປິດລັບໃຫ້ລັດພາຄີທີ່ກ່ຽວຂ້ອງຊາບກ່ຽວກັບໜັງສືແຈ້ງຄວາມທີ່ຍື່ນຕໍ່ຕົນຕາມອະນຸສັນຍາສະບັບນີ້, ເວັ້ນເສຍແຕ່ວ່າ ຄະນະກຳມະການພິຈາລະນາເຫັນວ່າ ການແຈ້ງຄວາມນັ້ນບໍ່ເປັນທີ່ຍອມຮັບ ຊຶ່ງ ບໍ່ຈຳເປັນຕ້ອງແຈ້ງໃຫ້ລັດພາຄີທີ່ກ່ຽວຂ້ອງຊາບ, ແລະ ໃນກໍລະນີບຸກຄົນ ຫລື ກຸ່ມຄົນນັ້ນ ເຫັນພ້ອມນຳການເປີດເຜີຍຊື່ຂອງພວກເຂົາເຈາໃຫ້ລັດພາຄີນັ້ນຊາບນຳ.

2. ພາຍໃນ 6 ເດືອນ, ຫລັງຈາກໄດ້ຮັບໜັງສືແຈ້ງຄວາມດັ່ງກ່າວ ລັດພາຄີຈະຕ້ອງຍື່ນຄຳອະທິບາຍ ຫລື ຄຳຖະແຫລງເປັນລາຍລັກອັກສອນໃຫ້ຄະນະກຳມະການ ເພື່ອ ໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາດັ່ງກ່າວ ພ້ອມທັງວິທີແກ້ໄຂ, ຖ້າມີ, ທີ່ລັດພາຄີນັ້ນໄດ້ປະຕິບັດມາແລ້ວ.

### ມາດຕາ7

1. ຄະນະກຳມະການ ຈະພິຈາລະນາແຈ້ງຄວາມທີ່ໄດ້ຮັບ ພາຍໃຕ້ອະນຸສັນຍາສະບັບນີ້ ບົນພື້ນຖານທຸກຂໍ້ມູນຂ່າວສານທີ່ຕົນໄດ້ຮັບຈາກບຸກຄົນ ຫລື ກຸ່ມຄົນ ແລະ ຈາກລັດພາຄີທີ່ກ່ຽວຂ້ອງ, ໂດຍມີເງື່ອນໄຂວ່າ ຂໍ້ມູນຂ່າວສານນີ້ຕ້ອງໄດ້ຖືກສົ່ງໄປໃຫ້ທຸກຝ່າຍທີ່ກ່ຽວຂ້ອງຊາບ.

2. ຄະນະກຳມະການຈະເປີດກອງປະຊຸມປິດລັບ ເມື່ອພິຈາລະນາແຈ້ງຄວາມພາຍໃຕ້ອະນຸສັນຍາສະບັບນີ້.

3. ຫລັງຈາກພິຈາລະນາແຈ້ງຄວາມອັນໃດນຶ່ງແລ້ວ, ຄະນະກຳມະການຈະສົ່ງຄຳເຫັນ ແລະ ທັດສະນະຂອງຕົນກ່ຽວກັບໜັງສືແຈ້ງຄວາມນັ້ນ, ພ້ອມດ້ວຍຂໍ້ສະເໜີແນະຂອງຕົນ, ຖ້າມີ, ໄປໃຫ້ທຸກຝ່າຍທີ່ກ່ຽວຂ້ອງຊາບ.

4. ລັດພາຄີ ຈະຕ້ອງໃຫ້ການພິຈາລະນາອັນຖືກຕ້ອງຕໍ່ທັດສະນະ ແລະ ຄຳເຫັນຂອງຄະນະກຳມະການ, ພ້ອມດ້ວຍຂໍ້ສະ ເໜີແນະ, ຖ້າມີ, ແລະຈະຕ້ອງຍື່ນຄຳຕອບເປັນລາຍລັກອັກສອນໄປຍັງຄະນະກຳມະການ ພາຍໃນກຳໜົດຫົກເດືອນ, ພ້ອມທັງຂໍ້ມູນຂ່າວສານກ່ຽວກັບມາດຕະການທີ່ໄດ້ດຳເນີນມາແລ້ວ ອັນເປັນການຕອບສະໜອງຕາມຄຳເຫັນ ແລະ ຂໍ້ສະເໜີແນະຂອງຄະນະກຳມະການ.

5. ຢູ່ໃນບົດລາຍງານຕໍ່ມາຂອງລັດພາຄີທີ່ໄດ້ເຮັດຂຶ້ນມາຕາມມາດຕາ 18 ຂອງສົນທິສັນຍາ, ຄະນະກຳມະການ ອາດຈະສະເໜີໃຫ້ລັດພາຄີສະໜອງຂໍ້ມູນຂ່າວສານເພີ່ມເຕີມກ່ຽວກັບທຸກມາດຕະການທີ່ລັດພາຄີນັ້ນໄດ້ປະຕິບັດ ເພື່ອຕອບສະໜອງຕາມຄຳເຫັນ ແລະ ຂໍ້ສະເໜີແນະຂອງຄະນະກຳມະການ, ຖ້າມີ, ລວມທັງມາດຕະການ ທີ່ຄະນະກຳມະການຖືວ່າເໝາະສົມ.

### ມາດຕາ8

1. ຖ້າວ່າຄະນະກຳມະການ ໄດ້ຮັບຂໍ້ມູນຂ່າວສານທີ່ໜ້າເຊື່ອຖືໄດ້ ອັນບົ່ງບອກເຖິງການລະເມີດສິດທິທີ່ໄດ້ລະບຸໄວ້ໃນສົນທິສັນຍານັ້ນຢ່າງຮ້າຍແຮງ ແລະ ເປັນລະບົບໂດຍລັດພາຄີ, ຄະນະກຳມະການ ຈະຂໍໃຫ້ລັດພາຄີນັ້ນໃຫ້ການຮ່ວມມືໃນການກວດກາເບິ່ງຂໍ້ມູນຂ່າວສານດັ່ງກ່າວ ແລະ ໃຫ້ຂໍ້ສັງເກດກ່ຽວກັບຂໍ້ມູນຂ່າວສານທີ່ກ່ຽວຂ້ອງນັ້ນ.

2. ໂດຍຄຳນຶງເຖິງຂໍ້ສັງເກດທີ່ລັດພາຄີທີ່ກ່ຽວຂ້ອງອາດໄດ້ສົ່ງໃຫ້, ພ້ອມດ້ວຍຂໍ້ມູນອື່ນໆທີ່ໜ້າເຊື່ອຖືໄດ້ທີ່ຕົນມີຢູ່, ຄະນະກຳມະການ ອາດຈະແຕ່ງຕັ້ງສະມາຊິກຂອງຕົນຜູ້ນຶ່ງ ຫລື ຫລາຍກວ່ານຶ່ງ ເພື່ອດຳເນີນການສືບສວນ ແລະ ລາຍງານໃຫ້ຄະນະກຳມະການໂດຍດ່ວນ. ເມື່ອເຫັນວ່າເປັນສິ່ງທີ່ສົມຄວນ ແລະ ໄດ້ຮັບການເຫັນພ້ອມຈາກລັດພາຄີ, ການສືບສວນ ອາດຈະລວມເຖິງການໄປຢ້ຽມຢາມປະເທດດັ່ງກ່າວນັ້ນ.

3. ຫລັງຈາກການກວດກາເບິ່ງຂໍ້ມູນທີ່ໄດ້ມາຈາກການສືບສວນດັ່ງກ່າວແລ້ວ, ຄະນະກຳມະການ ຈະຕ້ອງສົ່ງຂໍ້ມູນຂ່າວສານນັ້ນ ໄປໃຫ້ລັດພາຄີທີ່ກ່ຽວຂ້ອງພ້ອມດ້ວຍຄຳເຫັນ ແລະ ຂໍ້ສະເໜີແນະໃດໆທີ່ມີ.

4. ລັກພາຄີທີ່ກ່ຽວຂ້ອງ ຈະຕ້ອງໃຫ້ຂໍ້ສັງເກດຂອງຕົນ ແກ່ຄະນະກຳມະການ ພາຍໃນກຳໜົດຫົກເດືອນ ນັບແຕ່ມື້ໄດ້ຮັບຂໍ້ມູນ, ຄຳເຫັນ, ແລະ ຂໍ້ສະເໜີແນະຈາກຄະນະກຳມະການ.

5. ຄະນະກຳມະການຈະຕ້ອງດຳເນີນການສືບສວນຢ່າງປິດລັບ ແລະ ຈະຕ້ອງຂໍການຮ່ວມມືຈາກບັນດາລັດພາຄີໃນທຸກໄລຍະຂອງການດຳເນີນການສືບສວນ.

## ມາດຕາ9

1. ຄະນະກຳມະການ ອາດຈະຂໍໃຫ້ລັດພາຄີທີ່ກ່ຽວຂ້ອງ ບັນຈຸລາຍລະອຽດກ່ຽວກັບທຸກມາດຕະການທີ່ໄດ້ໃຊ້ໃນການຕອບສະໜອງຕາມການສືບສວນທີ່ດຳເນີນຕາມມາດຕາ8ຂອງອະນຸສັນຍາສະບັບນີ້ນັ້ນ ເຂົ້າໃນບົດລາຍງານຂອງລັດດັ່ງກ່າວ ຕາມມາດຕາ 18 ຂອງສົນທິສັນຍາ.

2. ຖ້າຈຳເປັນ, ພາຍຫລັງກຳໜົດ 6ເດືອນທີ່ບົ່ງໄວ້ໃນມາດຕາ 8.4 ນັ້ນ, ຄະນະກຳມະການ ອາດຈະສະເໜີໃຫ້ລັດພາຄີທີ່ກ່ຽວຂ້ອງ ແຈ້ງໃຫ້ຄະນະກຳມະການຊາບ ກ່ຽວກັບມາດຕະການຕ່າງໆທີ່ຕົນໄດ້ໃຊ້ໃນການຕອບສະໜອງການສືບສວນດັ່ງກ່າວ.

## ມາດຕາ10

1. ໃນເວລາລົງນາມ ຫລື ໃຫ້ສັດຕະຍາບັນ ຫລື ເຂົ້າຮ່ວມເປັນພາຄີຂອງອະນຸສັນຍາສະບັບນີ້, ແຕ່ລະລັດພາຄີມີສິດປະກາດວ່າ ຕົນບໍ່ຮັບຮູ້ສິດອຳນາດຂອງຄະນະກຳມະການທີ່ກຳໜົດໄວ້ຢູ່ໃນມາດຕາ 8 ແລະ 9.

2. ລັດພາຄີໃດທີ່ໄດ້ປະກາດ ດັ່ງໄດ້ບົ່ງໄວ້ໃນວັກ 1 ຂອງມາດຕານີ້ ສາມາດຖອນຄຳປະກາດດັ່ງກ່າວນັ້ນໄດ້ໃນທຸກເວລາ ໂດຍແຈ້ງໃຫ້ເລຂາທິການໃຫຍ່ຊາບ.

มาດຕາ11

ລັດພາຄີຈະດຳເນີນທຸກບາດກ້າວທີ່ເໝາະສົມ ເພື່ອຮັບປະກັນວ່າ ບຸກຄົນທີ່ຢູ່ພາຍໃຕ້ອຳນາດສານຂອງຕົນນັ້ນ ຈະບໍ່ຖືກຂົ່ມຂູ່ ຫລື ໄດ້ຮັບການກະທຳອັນບໍ່ດີ ຍ້ອນຜູ້ກ່ຽວໄດ້ຍື່ນໜັງສືແຈ້ງຄວາມ ໃຫ້ຄະນະກຳມະການ ຕາມອະນຸສັນຍາສະບັບນີ້.

ມາດຕາ12

ຄະນະກຳມະການ ຈະລວມເອົາທັງບົດສະຫລຸບຫຍໍ້ກ່ຽວກັບການເຄື່ອນໄຫວຂອງຕົນພາຍໃຕ້ອະນຸສັນຍາສະບັບນີ້ເຂົາໃນບົດລາຍງານປະຈຳປີຕາມມາດຕາ 21 ຂອງສົນທສັນຍາ.

ມາດຕາ13

ແຕ່ລະລັດພາຄີໃຫ້ສັນຍາວ່າຈະໂຄສະນາ ແລະ ເຜີຍແຜ່ສົນທິສັນຍາ ແລະ ອະນຸສັນຍາສະບັບນີ້ໃຫ້ມວນຊົນຮູ້ຈັກ ຢ່າງກ້ວາງຂວາງ ແລະ ອຳນວຍຄວາມສະດວກໃຫ້ປະຊາຊົນໄດ້ຊາບຂໍ້ມູນຂ່າວສານກ່ຽວກັບທັດສະນະ ແລະ ຂໍ້ສະເໜີແນະຂອງຄະນະກຳມະການ ໂດຍສະເພາະ ແມ່ນບັນຫາຕ່າງໆທີ່ກ່ຽວຂ້ອງກັບລັດພາຄີນັ້ນ.

ມາດຕາ14

ຄະນະກຳມະການຈະຕ້ອງສ້າງລະບຽບການດຳເນີນງານຂອງຕົນ ເພື່ອໃຊ້ໃນເວລາປະຕິບັດໜ້າທີ່ຕາມທີ່ອະນຸສັນຍາສະບັບ ນີ້ໄດ້ບົ່ງໄວ້.

ມາດຕາ 15

1. ອະນຸສັນຍາສະບັບນີ້ ຈະເປີດຮັບການລົງນາມຂອງທຸກໆລັດທີ່ໄດ້ລົງນາມ, ໃຫ້ສັດຕະຍາບັນ ຫລື ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາແລ້ວ.

2. ອະນຸສັນຍາສະບັບນີ້ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນຈາກທຸກໆລັດ ທີ່ໄດ້ໃຫ້ສັດຕະຍາບັນ ຫລື ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາ. ອະນຸສັນຍາສະບັບນີ້ ຈະຖືກເກັບຮັກສາໄວ້ນຳເລຂາທິການໃຫຍ່ສະຫະປະຊາຊາດ.

3. ອະນຸສັນຍາສະບັບນີ້ຈະເປີດຮັບການເຂົ້າຮ່ວມເປັນພາຄີຂອງທຸກໆລັດທີ່ໄດ້ ໃຫ້ສັດຕະຍາບັນ ຫລື ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາ.

4. ການເຂົ້າຮ່ວມເປັນພາຄີ ຈະມີຂຶ້ນໄດ້ດ້ວຍການຍື່ນສານເຂົ້າຮວມຕໍ່ ເລຂາທິການໃຫຍ່ສະຫະປະຊາຊາດ.

ມາດຕາ16

1. ອະນຸສັນຍາສະບັບນີ້ຈະເລີ່ມມີຜົນບັງຄັບໃຊ້ຫລັງຈາກ 3ເດືອນ ນັບແຕ່ມື້ທີ່ໄດ້ມີການມອບສານສັດຕະຍາບັນ ຫລື ສານເຂົ້າຮ່ວມສະບັບທີ່ 10 ໃຫ້ແກ່ ເລຂາທິການໃຫຍ່ສະຫະປະຊາຊາດ.

2. ໃນກໍລະນີລັດພາຄີໃດທີ່ໃຫ້ສັດຕະຍາບັນ ຫລື ເຂົ້າຮ່ວມເປັນພາຄີຂອງອະນຸສັນຍາສະບັບນີ້ ລຸນຫລັງທີ່ມື້ທີ່ອະນຸສັນຍານີ້ມີຜົນບັງຄັບໃຊ້, ອະນຸສັນຍານີ້ ຈະເລີ່ມມີຜົນບັງຄັບໃຊ້ສຳລັບລັດດັ່ງກ່າວຫລັງຈາກ 3 ເດືອນ ນັບແຕ່ມື້ທີ່ໄດ້ມີການຍື່ນສານສັດຕະຍາບັນ ຫລື ສານເຂົ້າຮ່ວມຂອງລັດດັ່ງກ່າວ.

## ມາດຕາ 17

ຈະບໍ່ອະນຸຍາດໃຫ້ເຮັດຂໍ້ສະຫງວນໃດໆໃນອະນຸສັນຍາສະບັບນີ້.

## ມາດຕາ18

1. ບໍ່ວ່າລັດພາຄີໃດໆກໍ່ຕາມ ກໍ່ລ້ວນແຕ່ມີສິດສະເໜີດັດແກ້ອະນຸສັນຍາສະບັບນີ້ ແລະ ສົ່ງຂໍ້ສະເໜີດັດແກ້ນັ້ນເຖິງເລຂາທິການໃຫຍ່ສະຫະປະຊາຊາດ ຫລັງຈາກນັ້ນ, ເລຂາທິການໃຫຍ່ຈະຕ້ອງແຈ້ງໃຫ້ລັດພາຄີຊາບກ່ຽວກັບຂໍ້ສະ ເໜີດັດແກ້ດັ່ງກ່າວ ພ້ອມທັງສະເໜີໃຫ້ລັດພາຄີແຈ້ງໃຫ້ຕົນຊາບວ່າພວກເຂົາເຈົ້າຢາກໃຫ້ມີກອງປະຊຸມລັດພາຄີ ເພື່ອພິຈາລະນາ ແລະ ລົງຄະແນນສຽງກ່ຽວກັບຂໍ້ສະເໜີນັ້ນ ຫລື ບໍ່. ໃນກໍລະນີ ຢ່າງໜ້ອຍນຶ່ງສ່ວນສາມ ຂອງລັດພາຄີຫາກເຫັນດີໃຫ້ມີກອງປະຊຸມຄືດັ່ງກ່າວນັ້ນ, ເລຂາທິການໃຫຍ່ຈະຕ້ອງຮຽກໂຮມກອງປະຊຸມ ພາຍ ໃຕ້ການອຸປະຖຳຂອງອົງການສະຫະປະຊາຊາດ. ຂໍ້ດັດແກ້ໃດໆທີ່ຖືກຮັບເອົາດ້ວຍສຽງສ່ວນຫລາຍຂອງລັດພາຄີ ທີ່ມີໜ້າເຂົ້າຮ່ວມ ແລະ ລົງຄະແນະສຽງຢູ່ໃນກອງປະຊຸມນັ້ນ ຈະຖືກນຳສະເໜີຕໍ່ສະມັດຊາໃຫຍ່ຂອງອົງການ ສະຫະປະຊາຊາດ ເພື່ອໃຫ້ມີການເຫັນດີ.

2. ຂໍ້ດັດແກ້ ຈະມີຜົນບັງຄັບໃຊ້ ໃນເມື່ອສະມັດຊາໃຫຍ່ອົງການສະຫະປະຊາຊາດໄດ້ໃຫ້ການເຫັນດີ ແລະ ສອງສ່ວນສາມຂອງລັດພາຄີຂອງອະນຸສັນຍາສະບັບນີ້ ຮັບຮອງໂດຍສອດຄ່ອງກັບຂັ້ນຕອນກົດໝາຍພາຍໃນລັດຂອງໃຜມັນ.

3. ເມື່ອໃດຂໍ້ດັດແກ້ມີຜົນບັງຄັບໃຊ້ແລ້ວ, ເມື່ອນັ້ນຂໍ້ດັດແກ້ດັ່ງກ່າວຈະມີຜົນຜູກມັດຕໍ່ລັດພາຄີທີ່ໄດ້ຮັບຮອງຂໍ້ດັດແກ້ດັ່ງກ່າວ. ລັດພາຄີອື່ນໆ ຍັງຈະຖືກຜູກມັດໂດຍຂໍ້ບັນຍັດຂອງອະນຸສັນຍານີ້ ແລະ ຂໍ້ດັດແກ້ຜ່ານມາທີ່ເຂົາເຈົ້າໄດ້ຮັບຮອງເອົາແລ້ວ.

## ມາດຕາ19

1. ບໍ່ວ່າລັດພາຄີໃດກໍ່ຕາມ ລ້ວນແຕ່ມີສິດຖອນຕົວ ຈາກການເປັນພາຄີຂອງອະນຸສັນຍາສະບັບນີ້ ໄດ້ທຸກເວລາ ໂດຍແຈ້ງ ເປັນລາຍລັກອັກສອນ ໃຫ້ເລຂາທິການໃຫຍ່ອົງການສະຫະປະຊາຊາດຊາບ. ການຖອນຕົວຈະມີຜົນສັກສິດຫລັງຈາກ 6 ເດືອນ ນັບແຕ່ວັນທີ່ເລຂາທິການໃຫຍ່ໄດ້ຮັບແຈ້ງການດັ່ງກ່າວ.

2. ການຖອນຕົວຈາກການເປັນພາຄີ ຈະຕ້ອງບໍ່ມີຜົນກະທົບກະເທືອນຕໍ່ການພິຈາລະນາ ຕາມຂໍ້ບັນຍັດຂອງອະນຸສັນຍາສະບັບນີ້ກ່ຽວກັບໜັງສືແຈ້ງຄວາມທີ່ໄດ້ຍື່ນຕໍ່ຄະນະກໍາມະການພາຍໃຕ້ມາດຕາ 2 ນັ້ນ ຫລື ຈະບໍ່ມີຜົນກະທົບກະ ເທືອນຕໍ່ການສືບສວນທີ່ດໍາເນີນຕາມມາດຕາ 8 ກ່ອນມື້ທີ່ການຖອນຕົວນັ້ນມີຜົນສັກສິດ.

### ມາດຕາ20

ເລຂາທິການໃຫຍ່ອົງການສະຫະປະຊາຊາດ ຈະຕ້ອງແຈ້ງໃຫ້ທຸກໆລັດຊາບກ່ຽວກັບ:

(ກ) ການລົງນາມ, ໃຫ້ສັດຕະຍາບັນ ແລະ ການເຂົາຮ່ວມເປັນພາຄີຂອງອະນຸສັນຍາສະບັບນີ້;

(ຂ) ວັນທີ່ທີ່ອະນຸສັນຍາສະບັບນີ້ ແລະ ຂໍ້ດັດແກ້ພາຍໃຕ້ມາດຕາ 18 ເລີ່ມມີຜົນບັງຄັບໃຊ້;

(ຄ) ການຖອນຕົວພາຍໃຕ້ມາດຕາ 19.

### ມາດຕາ21

1. ອະນຸສັນຍາສະບັບນີ້, ຊຶ່ງສະບັບຕົນທີ່ເປັນພາສາອາຣັບ, ຈີນ, ອັງກິດ, ຝຣັ່ງ, ລັດເຊຍ ແລະ ແອັດສະປາຍລ້ວນແຕ່ມີຄຸນຄ່າເທົ່າທຽມກັນນັ້ນ ຈະຕ້ອງຖືກເກັບຮັກສາໄວ້ໃນຫ້ອງສາລະບັນຂອງອົງການສະຫະປະຊາຊາດ.

2. ເລຂາທິການໃຫຍ່ອົງການສະຫະປະຊາຊາດ ຈະຕ້ອງສົ່ງສໍາເນົາຖືກຕ້ອງຕາມສະບັບເດີມຂອງອະນຸສັນຍາສະບັບນີ້ໃຫ້ໝົດທຸກລັດ ທີ່ບົ່ງໄວ້ຢູ່ໃນມາດຕາ 25ຂອງສົນທິສັນຍາ.

(ຈົບ)